# ການຄຸ້ມຄອງວັງສະຫງວນ

## ໃນແຂວງ ຊຽງຂວາງ

*ວັງສະຫງວນ ເປັນແຫລ່ງຜະລິດ ແລະ ສະໜອງອາຫານໃຫ້ແກ່ປະຊາຊົນບັນດາເຜົ່າ ດັ່ງນັ້ນ,ໃນແຕ່ລະບ້ານ ທີ່ຕັ້ງຢູ່ລຽບຕາມແມ່ນໍ້າ ສາຍຕ່າງໆ ຈຶ່ງໄດ້ພ້ອມກັນ ສ້າງຕັ້ງວັງສະຫງວນອະນຸລັກປ່າທໍາມະຊາດ ເພື່ອເປັນແຫລ່ງເພາະພັນ ຂະຫຍາຍພັນປາຊະນິດຕ່າງໆ ທີ່ຕິດພັນກັບການດໍາລົງຊີວິດການເປັນຢູ່ປະຈໍາວັນ ຂອງປະຊາຊົນບັນດາເຜົ່າ.*

## ການຄຸ້ມຄອງວັງສະຫງວນ

- ແຂວງຊຽງຂວາງ ໄດ້ຮັບການສ້າງຕັ້ງວັງສະຫງວນ 59 ວັງໃນນີ້ ມີວັງສະຫງວນ ຫວງຫ້າມເດັດຂາດ 34 ວັງ ແລະ ວັງສະຫງວນຊົມໃຊ້ 25 ວັງຢູ່ ເມືອງໜອງແຮດ, ພູກູດ ແລະ ເມືອງຄໍາ.
- ມີປະຊາກອນທີ່ໄດ້ຮັບຜົນປະໂຫຍດຈາກວັງສະຫງວນ ຈໍານວນ 1,468 ຄອບຄົວ.
- ຊະນິດປາສໍາຄັນທີ່ພົບເຫັນ

| | | | |
|---|---|---|---|
| 1. ປາພອນ 5% | 8. ປາບູ່ 2% | 15. ປາເພົ້າ 3% | 25. ອ່ຽນ 2:% |
| 2. ປາແສດ 5% | 9. ປາພັ່ນ 3% | 16. ປາພີ 5% | 26. ປາກົດເຫລືອງ 2% |
| 3. ປາແກງ 5% | 10. ປາວອກ 3% | 17. ປາຂີ້ຕຸນ 3% | 27. ປາເຄິງ 1% |
| 4. ປາພຸ້ງ 4% | 11. ປາເຕັດ 2% | 18. ປາມັນ 3% | 28. ປາຂ້າມຂ້າງ 2% |
| 5. ປາໄນ 4% | 12. ປາລາດ 3% | 19. ປາຄໍ່ 2% | 29. ປາຊີວຫົວເບີດ 2% |
| 6. ປານິນ 4% | 13. ປາມ້ອມ 3% | 20. ປາດຸກ 3% | 30. ປາຊີວກ້ວາງ 2% |
| 7. ປາແຂ້ແຍງ 3% | 14. ປາຈາດ 4% | 21. ປາກັ້ງ 3% | 31. ປາຊີວດອກເຂົ້າ 2% |

- ຊະນິດປາທີ່ໃຫຍ່ໝູ່ແມ່ນປາເຄິງ ແລະ ຊະນິດປາປານກາງແມ່ນ ປາພຸ້ງ ແລະ ປາທີ່ນ້ອຍກວ່າໝູ່ແມ່ນປາບູ່.
- ຊະນິດປາທີ່ພົບເຫັນໃໝ່ແມ່ນ ປາແສດ, ປາແກງຫວຽດ, ປາດູດຝຸ່ນ.
- ຊະນິດປາທີ່ສູນພັນແລ້ວ ປາເຕັດ.
- ລາຍຮັບຈາການຫາປາ ໃນຈໍານວນ 12 ບ້ານເປົ້າໝາຍໃນແຕ່ລະປີແມ່ນໄດ້ເກັບກໍາຂໍ້ມູນການຫາປາຢູ່ກ້ອງວັງສະຫງວນ ແລະ ເທິງວັງສະຫງວນເຊິ່ງໃນ 12 ບ້ານຈໍານວນ 1,468 ຄອບຄົວ ພວກເຮົາໄດ້ສູມເກັບກໍາຂໍ້ມູນຈໍານວນ 120 ຄອບຄົວ ປີໜຶ່ງ ສາມາດຫາປາໄດ້ 4,212 ກິໂລ ໃນນີ້ ຂາຍຈໍານວນ 1,056 ກິໂລ, ບໍລິໂພກພາຍໃນຄອບຄົວ ຈໍານວນ 3,127 ກິໂລ, ຖ້າຄິດໄລ່ເປັນເງິນຈາກການຫາປາໄດ້ແມ່ນ 126,775,000 ກີບ, ສະເລ່ຍແລ້ວຄອບຄົວໜຶ່ງຈະຫາປາໄດ້ 35 ກິໂລຕໍ່ປີ ຖ້າຄິດໄລ່ເປັນລາຍຮັບແມ່ນ 1,000,000ກີບ ໃນການຫາປາຕາມທໍາມະຊາດ.

## ໂອກາດ:

- ຂະຫຍາຍ ການສ້າງຕັ້ງວັງສະຫງວນປາໄປເມືອງອື່ນໆທີ່ມີເງື່ອນໄຂ.
- ສ້າງເປັນວັງສະຫງວນສໍາຫລັບ ການທ່ອງທ່ຽວຊົມປາ.
- ຈໍາກັດການປ່ອຍປາຊະນິດອື່ນທີ່ບໍ່ແມ່ນປາທໍາມະຊາດລົງສູ່ແມ່ນໍ້າ( ວັນປ່ອຍປາແຫ່ງຊາດ).












Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

NAFRI

TABI
The Agro-Biodiversity Initiative (TABI)